ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******.*******

ກະຊວງອຸດສາຫະກຳ ແລະ ການຄ້າ — ເລກທີ 051 /ອຄ.ກອກ

ກົມອຸດສາຫະກຳ — ນະຄອນຫລວງວຽງຈັນ, ວັນທີ 24 JAN 2011

## ບົດແນະນຳ

ຮຽນ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ.

ເລື່ອງ: ການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍເຈົ້າໜ້າທີ່ກວດກາໂຮງງານ.

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມອຸດສາຫະກຳ ເລກທີ 2457/ອຄ.ຈພງ, ລົງວັນທີ 25/12/09.
- ອີງຕາມຂໍ້ຕົກລົງວ່າດ້ວຍເຈົ້າໜ້າທີ່ກວດກາໂຮງງານ ເລກທີ 2037/ອຄ, ລົງວັນທີ 12/10/10.

ເພື່ອຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍເຈົ້າໜ້າທີ່ກວດກາໂຮງງານ ໃຫ້ເປັນເອກະພາບ ແລະ ຖືກຕ້ອງ ຕາມຈຸດປະສົງເປົ້າໝາຍຂອງການຄຸ້ມຄອງ ແລະ ສົ່ງເສີມ ໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ອຸດສາຫະກຳ ປຸງແຕ່ງ ແນໃສ່ ເຮັດໃຫ້ການເຄື່ອນໄຫວວຽກງານກວດກາໂຮງງານ ມີປະສິດທິຜົນ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ ກົມອຸດສາຫະກຳ ອອກບົດແນະນຳ ດັ່ງນີ້:

### ກ. ການສ້າງຕັ້ງໜ່ວຍງານກວດກາໂຮງງານ

ເຈົ້າໜ້າທີ່ກວດກາໂຮງງານ ແມ່ນໜ່ວຍງານວິຊາການຂອງລັດ ສ້າງຕັ້ງຂຶ້ນພາຍໃຕ້ຂໍ້ຕົກລົງວ່າດ້ວຍ ເຈົ້າໜ້າທີ່ກວດກາໂຮງງານ ໂດຍການຕົກລົງແຕ່ງຕັ້ງຈາກທ່ານລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີຂອງກົມອຸດສາຫະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ. ເຈົ້າໜ້າທີ່ກວດກາໂຮງງານ ມີບັດເຈົ້າໜ້າທີ່ກວດກາໂຮງງານ ຊຶ່ງອອກໃຫ້ໂດຍກົມອຸດສາຫະກຳ ຕາມທີ່ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງ ເລກທີ 2037/ອຄ, ລົງວັນທີ 12/10/2010. ການສ້າງຕັ້ງໜ່ວຍງານກວດກາໂຮງງານ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

**1/. ການຄັດເລືອກພະນັກງານ**

1). ຂັ້ນກະຊວງ ໂດຍຂຶ້ນກັບກົມອຸດສາຫະກຳ, ກົມອຸດສາຫະກຳ ເປັນຜູ້ຄັດເລືອກພະນັກງານວິຊາການ ທີ່ສັງກັດໃນກົມອຸດສາຫະກຳ ຈຳນວນ 5-8 ທ່ານ ເພື່ອປະກອບເຂົ້າເປັນໜ່ວຍງານເຈົ້າໜ້າທີ່ກວດກາໂຮງງານ, ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງ ເລກທີ 2037/ອຄ.

2). ຂັ້ນພະແນກ ໂດຍຂຶ້ນກັບ ພະແນກ ອ.ຄ ແຂວງ, ນະຄອນຫລວງ, ພະແນກ ອ.ຄ ແຂວງ, ນະຄອນຫລວງ ເປັນຜູ້ຄັດເລືອກພະນັກງານວິຊາການ ທີ່ສັງກັດໃນພະແນກ ອ.ຄ ແຂວງ, ນະຄອນຫລວງ ຈຳນວນ 3-5

ທ່ານ ເພື່ອປະກອບເຂົ້າເປັນໜ່ວຍງານເຈົ້າໜ້າທີ່ກວດກາໂຮງງານ, ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງ ເລກທີ 2037/ອຄ.

3). ຂັ້ນເມືອງ ໂດຍຂຶ້ນກັບຫ້ອງການ ອ.ຄ ເມືອງ, ຫ້ອງການ ອ.ຄ ເມືອງ ເປັນຜູ້ຄັດເລືອກພະນັກງານວິຊາການ ທີ່ສັງກັດໃນຫ້ອງການ ອ.ຄ ເມືອງ ຈຳນວນ 2-3 ທ່ານ ເພື່ອປະກອບເຂົ້າເປັນໜ່ວຍງານເຈົ້າໜ້າທີ່ກວດກາໂຮງງານ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງເລກທີ 2037/ອຄ.

**2/. ການສະເໜີຂໍແຕ່ງຕັ້ງເຈົ້າໜ້າທີ່ກວດກາໂຮງງານ**

1). ຂັ້ນກົມ ອ.ກ: ໃຫ້ພະແນກຄຸ້ມຄອງ ແລະ ສົ່ງເສີມ ອຸດສາຫະກຳ ສົມທົບກັບພະແນກການທີ່ກ່ຽວຂ້ອງ ຄົ້ນຄວ້າ ຄັດເລືອກພະນັກງານວິຊາການທີ່ສັງກັດຢູ່ໃນພະແນກຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກຳ, ພະແນກມາດຕະຖານຜະລິດຕະພັນອຸດສາຫະກຳ ແລະ ພະແນກສິ່ງແວດລ້ອມ ແລະ ເຄມີອຸດສາຫະກຳ ເພື່ອນຳສະເໜີຕໍ່ກົມອຸດສາຫະກຳ.

2). ຂັ້ນພະແນກ ອ.ຄ ແຂວງ, ນະຄອນຫລວງ: ໃຫ້ພະແນກ ອ.ຄ ແຂວງ, ນະຄອນຫລວງ ເຮັດໃບສະເໜີຕາມ (ແບບຟອມ ຈ.ກ 1) ໂດຍລະບຸຈຳນວນ, ຊື່, ຕຳແໜ່ງ, ຄວາມຮັບຜິດຊອບ ແລະ ປະຫວັດຫຍໍ້ຂອງພະນັກງານທີ່ຈະເປັນເຈົ້າໜ້າທີ່ກວດກາໂຮງງານ ພ້ອມທັງຮູບຖ່າຍ ບໍ່ເກີນ 3 ເດືອນ ຂະໜາດ (3x4)ຊມ, ພື້ນສີຂາວ ຈຳນວນ 2 ໃບ ພ້ອມດ້ວຍເງິນ 36.000 ກີບຕໍ່ຄົນ (ຄ່າພິມບັດ ແລະ ຄ່າຝາກ) ແລ້ວ ສົ່ງມາຍັງກົມອຸດສາຫະກຳ, ກະຊວງ ອ.ຄ.

3). ຂັ້ນຫ້ອງການ ອ.ຄ ເມືອງ: ໃຫ້ຫ້ອງການ ອ.ຄ ເມືອງ ເຮັດໃບສະເໜີຕາມ (ແບບຟອມ ຈ.ກ 1) ໂດຍລະບຸຈຳນວນ, ຊື່, ຕຳແໜ່ງ, ຄວາມຮັບຜິດຊອບ ແລະ ປະຫວັດຫຍໍ້ຂອງພະນັກງານທີ່ເປັນເຈົ້າໜ້າທີ່ກວດກາໂຮງງານ ພ້ອມທັງຮູບຖ່າຍ ບໍ່ເກີນ 3 ເດືອນ ຂະໜາດ (3x4)ຊມ, ພື້ນສີຂາວ ຈຳນວນ 2 ໃບ ພ້ອມດ້ວຍເງິນ 36.000 ກີບຕໍ່ຄົນ (ຄ່າພິມບັດ ແລະ ຄ່າຝາກ) ແລ້ວ ສົ່ງໃຫ້ພະແນກ ອ.ຄ ແຂວງ, ນະຄອນຫລວງ ເພື່ອສັງລວມ ແລະ ສະເໜີມາຍັງກົມອຸດສາ ຫະກຳ, ກະຊວງ ອ.ຄ.

4). ຫລັງຈາກກົມອຸດສາຫະກຳ ໄດ້ຮັບຈຳນວນ ແລະ ລາຍຊື່ພະນັກງານທັງໝົດແລ້ວ ຈຶ່ງຈະນຳສະເໜີຕໍ່ກະຊວງ ອ.ຄ ເພື່ອພິຈາລະນາອອກຂໍ້ຕົກລົງ ຕາມລະບຽບການ.

**ຂ. ການດຳເນີນການກວດກາໂຮງງານ**

1/. ເຈົ້າໜ້າທີ່ກວດກາໂຮງງານ ມີສິດລົງກວດກາໂຮງງານ ທີ່ມີໃບອະນຸຍາດດຳເນີນກິດຈະການ ຫລື ບໍ່ມີໃບອະນຸຍາດດຳເນີນກິດຈະການ ດ້ວຍການຂຶ້ນແຜນການເຄື່ອນໄຫວລະອຽດປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ຕາມສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາໂຮງງານ ທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງ ເລກທີ 2037/ອຄ ຢ່າງເຂັ້ມງວດ.

2/. ຂອບເຂດສິດໃນການກວດກາໂຮງງານ ໃຫ້ປະຕິບັດຕາມມາດຕາ 8 ຂອງຂໍ້ຕົກລົງເລກທີ 2037/ອຄ ແລະ ມາດຕາ 5, 6, 7 ຂອງຂໍ້ຕົກລົງວ່າດ້ວຍ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ເລກທີ 1195/ອຄ, ລົງວັນທີ 19/6/09.

3/. ຮູບການກວດກາໂຮງງານ ໃຫ້ປະຕິບັດຕາມມາດຕາ 10 ຂອງຂໍ້ຕົກລົງເລກທີ 2037/ອຄ ຄືດັ່ງນີ້:

1). ການກວດກາຕາມລະບົບປົກກະຕິ ເຊັ່ນ: ການຂໍອະນຸຍາດດຳເນີນ, ຕໍ່ອາຍຸ ຫລື ຂະຫຍາຍໂຮງງານ ແມ່ນວຽກປົກກະຕິ ຂອງໜ່ວຍງານຂະແໜງຄຸ້ມຄອງອຸດສາຫະກຳ ແລະ ຫັດຖະກຳ.

2). ການກວດກາໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ ແລະ ການກວດກາແບບກະທັນຫັນ ແມ່ນເປັນວຽກຂອງເຈົ້າໜ້າທີ່ກວດກາໂຮງງານ. ໃນນີ້, ການລົງກວດກາແບບກະທັນຫັນ ໃນໂມງລັດຖະການ ຫລື ນອກ

ໂມງລັດຖະການ ຕ້ອງໄດ້ຮັບການຕົກລົງເຫັນດີຈາກຂັ້ນເທິງຖັດຕົນດັ່ງນີ້: (1) ຈາກກົມ ສໍາລັບເຈົ້າໜ້າທີ່ກວດກາໂຮງງານ ທີ່ສັງກັດໃນກົມອຸດສາຫະກໍາ; (2) ຈາກພະແນກ ອ.ຄ ແຂວງ, ນະຄອນຫລວງ, ສໍາລັບເຈົ້າໜ້າທີ່ກວດກາໂຮງງານຂັ້ນພະແນກ; (3) ຈາກຫ້ອງການ ອ.ຄ ເມືອງ, ສໍາລັບເຈົ້າໜ້າທີ່ກວດກາໂຮງງານຂັ້ນເມືອງ.

4/. ບັດເຈົ້າໜ້າທີ່ກວດກາໂຮງງານ ແມ່ນນໍາໃຊ້ໄດ້ສະເພາະແຕ່ເຈົ້າໜ້າທີ່ກວດກາໂຮງງານ ໃນຂົງເຂດອຸດສາຫະກໍາປຸງແຕ່ງເທົ່ານັ້ນ, ຫ້າມເອົາບັດດັ່ງກ່າວໄປນໍາໃຊ້ເພື່ອຈຸດປະສົງອື່ນ ຫລື ໃຫ້ຜູ້ອື່ນໃຊ້ແທນ ໂດຍທີ່ບໍ່ຖືກຕ້ອງ ແລະ ໃຫ້ນໍາໃຊ້ໃນວັນເວລາລັດຖະການເທົ່ານັ້ນ. ໃນກໍລະນີມີຄວາມຈໍາເປັນເພື່ອກວດການອກໂມງລັດຖະການ ຕ້ອງມີການຕົກລົງ ແລະ ໄດ້ຮັບອະນຸຍາດຈາກຂັ້ນເທິງ ຕາມຂໍ້ (3/.) ຂອງຂໍ້ (ຂ) ຂ້າງເທິງນີ້.

ໃນກໍລະນີບັດເຈົ້າໜ້າທີ່ກວດກາໂຮງງານ ສູນຫາຍ, ຈີກຂາດ, ເປື້ອນ ຫລື ໝົດກໍານົດນໍາໃຊ້, ໃຫ້ສະເໜີຂໍບັດໃໝ່ປ່ຽນແທນ ຫລື ຕໍ່ອາຍຸບັດ ໂດຍສະເໜີຕໍ່ກົມອຸດສາຫະກໍາ ແລະ ປະຕິບັດຕາມຂັ້ນຕອນ ທີ່ລະບຸໄວ້ໃນຂໍ້ (1/.), (2/.) ຂອງຂໍ້ (ກ) ໃນບົດແນະນໍາສະບັບນີ້. ກໍລະນີຜູ້ທີ່ຖືກແຕ່ງຕັ້ງ ພາກພົ້ນຈາກການເປັນເຈົ້າໜ້າທີ່ກວດກາໂຮງງານ ຕ້ອງສົ່ງບັດຄືນໃຫ້ກົມອຸດສາຫະກໍາ ຫລື ພະແນກ ອ.ຄ ແຂວງ, ນະຄອນຫລວງ ຫລື ຫ້ອງການ ອ.ຄ ເມືອງ ບ່ອນທີ່ຕົນສັງກັດຢູ່ ຕາມມາດຕາ 12 ຂອງຂໍ້ຕົກລົງເລກທີ 2037/ອຄ.

5/. ການລົງກວດກາໂຮງງານ ທຸກໆຄັ້ງຕ້ອງມີບົດບັນທຶກເປັນລາຍລັກອັກສອນ ຢ່າງລະອຽດ, ຖືກຕ້ອງຕາມຫລັກວິຊາການ ເພື່ອເປັນບ່ອນອີງໃນການປະຕິບັດງານ ເຊັ່ນ: ການໃຫ້ຄໍາແນະນໍາແກ່ຜູ້ດໍາເນີນກິດຈະການໂຮງງານ ຕ້ອງຢູ່ໃນຂອບເຂດຂອງລະບຽບກົດໝາຍທີ່ໄດ້ກໍານົດໄວ້ ແລະ ໃຫ້ປະຕິບັດຕາມແບບຟອມ ຮ/ງ 8 ຢ່າງເຂັ້ມງວດ.

6/. ໃນກໍລະນີເຈົ້າໜ້າທີ່ກວດກາໂຮງງານ ເຄື່ອນໄຫວວຽກງານກວດກາໂຮງງານບໍ່ຖືກຕ້ອງຕາມສິດ ແລະ ໜ້າທີ່ທີ່ໄດ້ກໍານົດໄວ້ ໃຫ້ປະຕິບັດມາດຕະການຢ່າງເຂັ້ມງວດຕາມມາດຕາ 14 ຂອງຂໍ້ຕົກລົງເລກທີ 2037/ອຄ.

7/. ງົບປະມານໃນການລົງປະຕິບັດວຽກງານກວດກາໂຮງງານ ໃຫ້ນໍາໃຊ້ງົບປະມານຂອງພະແນກ ອ.ຄ ແຂວງ, ນະຄອນຫລວງ, ຫ້ອງການ ອ.ຄ ເມືອງ ແລະ ກົມອຸດສາຫະກໍາ ຕາມເງື່ອນໄຂເໝາະສົມ.

8/. ໃຫ້ສະຫລຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານກວດກາໂຮງງານ ເປັນແຕ່ລະໄລຍະຕາມລະບຽບການ, ໂດຍສະເພາະ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີການແກ້ໄຂວຽກງານດັ່ງກ່າວ ແລ້ວສົ່ງມາຍັງກົມອຸດສາຫະກໍາ ຊາບ ເພື່ອສັງລວມລາຍງານ ແລະ ສະເໜີຂໍທິດຊີ້ນໍາຈາກຂັ້ນເທິງເພື່ອແກ້ໄຂໃຫ້ທັນເວລາ.

ດັ່ງນັ້ນ, ຈຶ່ງແນະນໍາມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມອຸດສາຫະກໍາ

ຫວ່າງ ພົມມະສັກ